**ສົນທິສັນຍາຊາຍແດນ**

**ລະຫວ່າງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ**

**ແລະ**

**ສາທາລະນະລັດ ປະຊາຊົນ ຈີນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ປະຊາຊົນ ຈີນ, ໂດຍເລີ່ມຈາກຜົນປະໂຫຍດ ອັນຕົ້ນຕໍຂອງປະຊາຊົນ ສອງຊາດ,

ດ້ວຍຄວາມປາດ ຖະໜາໃນການປັບປຸງ ແລະ ຂະຫຍາຍການພົວພັນມິດຕະພາບ ຖານບ້ານໃກ້ເຮືອນຄຽງ ລະຫວ່າງ ສອງປະເທດ,

ບົນພື້ນຖານຫລັກການເຄົາລົບເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງກັນ ແລະ ກັນ, ບໍ່ຮຸກຮານກັນ, ບໍ່ແຊກແຊງເຂົ້າກິດຈະການ ພາຍໃນຂອງກັນ ແລະ ກັນ, ສະເໝີພາບ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ແລະ ຢູ່ຮ່ວມ ກັນໂດຍສັນຕິ,

ເພື່ອສ້າງເສັ້ນຊາຍແດນ ລະຫວ່າງ ສອງປະເທດ ໃຫ້ເປັນເສັ້ນຊາຍແດນຖາ ວອນ ສັນຕິພາບ, ມິດຕະພາບ ແລະ ການຮ່ວມມື,

ໂດຍຜ່ານການປຶກສາຫາລື ດ້ວຍໄມຕີຈິດມິດຕະພາບ ຈິ່ງໄດ້ຕົກລົງເຮັດສົນທິສັນ ຍາສະບັບນີ້ ແລະ ໄດ້ພ້ອມກັນຕົກລົງ ບັນດາຂໍ້ຄວາມດັ່ງລຸ່ມນີ້:

## <u>ມາດຕາ 1</u>

ຄູ່ສົນທິສັນຍາ ໄດ້ເຫັນດີເຫັນພ້ອມນຳກັນ ການພັນລະນາທິດເນັ່ງຂອງເສັ້ນຊາຍ ແດນ ລະຫວາງ ປະເທດທັງສອງດັ່ງລຸ່ມນີ້:

1. ຈຸດເລີ້ມຕົ້ນຂອງເສັ້ນຊາຍແດນ ລາວ-ຈີນ ເບື້ອງຕາເວັນອອກແຕ່ຈຸດສູງ 1875,1ແມັດ ຂອງພູຄວາມລາຊານ ( ຝ່າຍຈີນເອີ້ນວ່າ ຊີເສີງຕ້າຊານ ) ຈາກນັ້ນເສັ້ນຊາຍແດນ ເນັ່ງໄປທາງທິດຕາເວັນຕົກສ່ຽງເໜືອ ທິດລວມຕາມສັນພູປັນນ້ຳ ລະຫວ່າງ ບັນດາສາຂາຍ່ານເໜືອ ຂອງນ້ຳຄາງທີ່ໄຫຼຕົກໃສ່ນ້ຳອູ ພ້ອມດ້ວຍບັນດາສາຂາຍ່ານເໜືອຂອງນ້ຳອູໃນດິນລາວ ແລະ ບັນດາສາຂາຍ່ານເໜືອນ້ຳຫູຄາ, ນ້ຳເມືອງເອັ່ງ ທີ່ໄຫຼຕົກໃສ່ນ້ຳລີຊຽນ ຢູ່ດິນຈີນ ເນັ່ງຜ່ານຈຸດສູງ 1187 ແມັດ ພູຊານຈໍ່ຈຽນ( ຝ່າຍຈີນເອີ້ນວ່າ ພູຢຽນຈໍ່ ) ໄປຫາຈຸດສູງ 1506 ແມັດ ແລ້ວໄປທາງທິດຕາເວັນຕົກ ລ້ຽວໄປຫາທິດຕາເວັນຕົກສ່ຽງໃຕ້ ຜ່ານຈຸດສູງ 1462,2 ແມັດ ແລະ ຈຸດສູງ 1349,6 ແມັດຮອດຈຸດສູງ 1058,1 ແມັດ ພູຊີ່ງເຫົ່າ ; ຈາກນັ້ນ, ຫັກລົງໄປທາງທິດໃຕ້ຮອດຈຸດສູງ 1258 ແມັດ. ຈາກນັ້ນເສັ້ນຊາຍແດນສືບຕໍ່ເນັ່ງໄປທາງທິດຕາເວັນຕົກສ່ຽງເໜືອ ຕາມສັນພູປັນນ້ຳຜ່ານຈຸດສູງ 1330,7 ແມັດ ໄປຫາຈຸດສູງ 1280,3 ແມັດ ແລ້ວໄປທາງທິດຕາເວັນຕົກສ່ຽງເໜືອ ແລະ ໄປທາງທິດຕາເວັນຕົກສ່ຽງໃຕ້ ຮອດຈຸດສູງ 1481,4 ແມັດ ພູຈູລິນ; ຈາກນັ້ນ, ເສັ້ນຊາຍແດນສືບຕໍ່ເນັ່ງໄປທາງທິດຕາເວັນຕົກຕາມ ສັນພູປັນນ້ຳ ດັ່ງກາວປະມານນຶ່ງພັນແມັດ (1000 ແມັດ) ແລ້ວໄປຕາມສັນພູປັນນ້ຳ ລະ ຫວ່າງບັນດາສາຂານ້ຳອູ ພ້ອມດ້ວຍສາຂາຍ່ານເໜືອນ້ຳແດງ. ນ້ຳລາທີ່ໄຫຼຕົກໃສ່ນ້ຳອູໃນ ດິນລາວ ແລະ ບັນ ດາສາຂາຍ່ານເໜືອຂອງນ້ຳມານເຄີລາວ, ນ້ຳພູຊາງ ແລະ ນ້ຳຊານເຈັຍໃຈ ຢູ່ ດິນຈີນ ແລ້ວລົງ ໄປທາງທິດໃຕ້ ຜ່ານຈຸດສູງ 1692,3 ແມັດ ພູຈູຈວນ, ຈຸດສູງ 1359,2 ແມັດພູມາລີຊູ, ຈຸດສູງ 1417,2 ແມັດ, ຈຸດສູງ 1095,5 ແມັດ, ຈຸດສູງ 1223,2 ແມັດ, ຈຸດສູງ 1596,0 ແມັດ ພູໂຄງຊິນຊູ, ຈຸດສູງ 1713,7 ແມັດ, ກິວໂຄງຊິນຊູ ທີ່ໝາຍ ຈຸດສູງ 1465,0 ແມັດ ໄປຈົນເຖິງຈຸດສູງ 1710,6 ແມັດ.

2. ເລີ້ມແຕ່ຈຸດສູງ 1710,6 ແມັດ ເປັນຕົ້ນໄປ ເສັ້ນຊາຍແດນສືບຕໍ່ເນັ່ງໄປທາງທິດຕາເວັນອອກສ່ຽງໃຕ້ ທິດລວມຕາມສັນພູປັນນ້ຳລະຫວ່າງ ບັນດາສາຂາຍ່ານເໜືອຂອງນ້ຳຊູມໃຫ່ຽ, ນ້ຳໄງ, ນ້ຳລ່ຽງ (ຍ່ານເໜືອເອີ້ນວ່າ ນ້ຳບູນ), ນ້ຳແງ່ນ, ນ້ຳພາກ ທີ່ໄຫຼຕົກໃສ່ນ້ຳອູໃນດິນລາວ ແລະ ບັນດາສາຂາຍ່ານ ເໜືອຂອງນ້ຳປູໂລງ, ບັນດາສາຂາຍ່ານເໜືອຂອງນ້ຳອຽນ, ນ້ຳຕາວ, ນ້ຳໂລງກາ, ນ້ຳຣັງ, ນ້ຳມູລັງ ແລະ ນ້ຳມູເວີ ທີ່ໄຫຼຕົກໃສ່ນ້ຳລາ ໃນດິນຈີນ ຈົນຮອດຈຸດສູງ 1304 ແມັດ ແລ້ວຂຶ້ນໄປທາງທິດຕາເວັນອອກສ່ຽງເໜືອຮຮດຈຸດສູງ 1183,8 ແມັດ ພູບົວນາວ ແລ້ວຫັນ ໄປທາງທິດຕາເວັນ

ອອກສ່ຽງໃຕ້ຜ່ານຈຸດສູງ 1366 ແມັດ, ຈຸດສູງ 1312 ແມັດ ໄປຈົນຮອດ ຈຸດສູງ 1193 ແມັດ ແລ້ວລົງໄປທາງທິດໃຕ້ ທິດລວມຜ່ານຈຸດສູງ 1529,8 ແມັດ ພູຊູຈູ ໄປ ຈົນຮອດຈຸດສູງ 1636,7 ແມັດ ພູເມົາຊາວ ແລ້ວຂຶ້ນໄປທາງທິດຕາເວັນອອກສ່ຽງເໜືອ ໄປ ຮອດຈຸດສູງ 1413 ແມັດ ແລ້ວຫັນໄປທາງທິດຕາເວັນອອກສ່ຽງໃຕ້ຮອດ ຈຸດສູງ 1353 ແມັດ ແລ້ວຫັນໄປທາງທິດຕາເວັນຕົກ ຜ່ານຈຸດສູງ 1302 ແມັດ ຮອດຈຸດສູງ 1346,1 ແມັດ ແລ້ວ ເນັ່ງໄປທາງທິດຕາເວັນຕົກ ຫັນລົງໄປທາທິດໃຕ້ ແລ້ວໄປທາງທິດຕາເວັນອອກສ່ຽງໃຕ້ ຜ່ານຈຸດສູງ 1322 ແມັດ ລົງໄປທາງທິດໃຕ້ທິດລວມຮອດຈຸດສູງ 1490 ແມັດພູໂຄງຫູເຈີ ແລ້ວໄປທາງທິດ ຕາເວັນຕົກສ່ຽງໃຕ້ ຮອດຈຸດສູງ 1364,7 ແມັດ ແລ້ວລົງໄປທາງທິດຕາ ເວັນອອກສ່ຽງໃຕ້ ຮອດຈຸດສູງ 1327 ແມັດ ແລ້ວລົງໄປທາງທິດຕາເວັນຕົກສ່ຽງໃຕ້ ຜ່ານ ຈຸດສູງ 1181 ແມັດ ຮອດ ຈຸດສູງ 1115 ແມັດ ແລ້ວລົງໄປທາງທິດຕາເວັນອອກສ່ຽງໃຕ້ ຜ່ານຈຸດສູງ 1365 ແມັດ ແລ້ວໄປທາງທິດຕາເວັນອອກ ຜ່ານຈຸດສູງ 1175,1 ແມັດ ໄປຮອດຈຸດສູງ 1612 ແມັດ, ແລ້ວສືບຕໍ່ໄປທາງທິດຕາເວັນອອກ ແລ້ວຫັນລົງໄປທາງ ທິດໃຕ້ຜ່ານຈຸດສູງ 1674 ແມັດ ພູຕົງຈິງປາວ ຮອດຈຸດສູງ 1464,1 ແມັດ ແລ້ວປ່ຽນ ທິດໄປທາງທິດຕາເວັນ ຕົກທິດລວມຫັນໄປທາງທິດຕາເວັນຕົກສ່ຽງໃຕ້ ຜ່ານຈຸດສູງ 1286 ແມັດ ພູພິງດີ ຈົນຮອດ ຈຸດສູງ 1471,6 ແມັດ ພູຈິງເອີນ.

3. ເລີ້ມແຕ່ຈຸດສູງ 1471,6 ແມັດ ພູຈິງເອີນ ເປັນຕົ້ນໄປ ເສັ້ນຊາຍແດນໄປຕາມ ສັນພູປັນນໍ້າ ລະຫວ່າງ ບັນດາສາຂາຍານເໜືອທີ່ໄຫຼຕົກໃສ່ນໍ້າທາຢູ່ດິນລາວ ແລະ ບັນດາ ສາຂາຍານເໜືອຂອງນໍ້າມູເວີ, ນໍ້ານານ ທີ່ໄຫຼຕົກໃສ່ນໍ້າລາຢູ່ດິນຈີນ ເນັ່ງໄປທາງທິດ ຕາເວັນຕົກຜ່ານຈຸດສູງ 1518,1 ແມັດ ພູໄປຊີຢຽນ ແລ້ວຫັນໄປທາງທິດຕາເວັນຕົກ ສ່ຽງເໜືອ ທິດລວມຜ່ານຈຸດສູງ 1345,1 ແມັດ ໄປຮອດ ຈຸດສູງ 1147 ແມັດ. ຈາກນັ້ນ ຫັນໄປທາງທິດຕາເວັນຕົກສ່ຽງໃຕ້ໄປຮອດຈຸດສູງ 1368,7 ແມັດ ແລ້ວຫັນໄປທາງທິດ ຕາເວັນອອກສ່ຽງເໜືອ ຮອດຈຸດສູງ 1365,6 ແມັດ ແລ້ວຫັນໄປ ທາງທິດຕາເວັນຕົກ ສ່ຽງເໜືອ ຜ່ານຈຸດສູງ 1326,8 ແມັດ, ຈຸດສູງ 1221 ແມັດ ພູພິງລຽງ ໄປຮອດຈຸດສູງ 1107 ແມັດ ແລ້ວໄປທາງທິດຕາເວັນຕົກສ່ຽງໃຕ້ ຜ່ານຈຸດ ສູງ 1253 ແມັດ, ຈຸດສູງ 1567 ແມັດ, ຈຸດສູງ 1560 ແມັດ ພູມ່າງຊີທີ ຈົນຮອດຈຸດສູງ 1338 ແມັດ.

4. ເລີ້ມແຕ່ຈຸດສູງ 1338 ແມັດເປັນຕົ້ນໄປເສັ້ນຊາຍແດນ ໄດ້ຫຼີກອອກຈາກສັນພູ

ປັນນ້ຳທີ່ໄດ້ກ່າວຂ້າງເທິງນັ້ນ ແລ້ວສືບຕໍ່ໄປທາງທິດຕາເວັນຕົກສ່ຽງເໜືອ ຕາມສັນພູຜ່ານຈຸດສູງ 824,4 ແມັດ ໄປຈົນຮອດຈຸດສູງ 923 ແມັດ. ຈາກນັ້ນໄປທາງທິດຕາເວັນອອກສ່ຽງເໜືອ ຮອດຈຸດສູງ 1116 ແມັດ ພູກວາງພາປາ ແລ້ວຂຶ້ນໄປທາງທິດເໜືອ ແລະ ຫັນໄປທາງທິດຕາເວັນຕົກສ່ຽງເໜືອ ລົງຕັດນ້ຳຢູນ ຢູ່ວັງກະທິງ (ຝ່າຍຈີນເອີ້ນວ່າ ຕາວັນຖັງ) ຈາກນັ້ນຂຶ້ນໄປຕາມສັນພູ ຜ່ານກິ່ວດິນແດງ (ຝ່າຍຈີນເອີ້ນວ່າ ກິ່ວປາໂຊ) ທີ່ໝາຍຈຸດສູງ 718 ແມັດ, ຈາກນັ້ນສືບຕໍ່ໄປຕາມສັນພູ ໄປທາງທິດຕາເວັນຕົກສ່ຽງເໜືອ ຜ່ານຈຸດສູງ 967 ແມັດ ໄປທາງທິດຕາເວັນຕົກສ່ຽງເໜືອ ແລ້ວຫັນໄປທາງທິດຕາເວັນອອກສ່ຽງເໜືອ ຈົນຮອດຈຸດສູງ 781 ແມັດ.

5. ເລີ້ມແຕ່ຈຸດສູງ 781 ແມັດເປັນຕົ້ນໄປເສັ້ນຊາຍແດນ ໄປຕາມສັນພູປັນນ້ຳ ລະຫວ່າງ ບັນດາສາຂາຂອງແມ່ນ້ຳຂອງ ເບື້ອງຕາເວັນອອກທີ່ໄຫຼຕົກໃສ່ແມ່ນ້ຳຂອງ ໃນດິນລາວ ແລະ ບັນດາສາຂາຂອງ ນ້ຳລາ, ບັນດາສາຂາຂອງນ້ຳຢູນ ທາງເບື້ອງຕາເວັນຕົກທີ່ໄຫຼຕົກໃສ່ນ້ຳລາໃນດິນຈີນ ແລ້ວຂຶ້ນໄປທາງທິດເໜືອຜ່ານຈຸດສູງ 864 ແມັດ ຮອດຈຸດສູງ 1362 ແມັດ ແລ້ວປ່ຽນທິດໄປ ທາງທິດຕາເວັນຕົກຜ່ານຈຸດສູງ 973 ແມັດ ໄປຈົນຮອດເສັ້ນໃຈກາງຂອງຄອງນ້ຳເລິກ ຂອງແມ່ນ້ຳຂອງເບື້ອງໃຕ້ ຂອງປາກນ້ຳລາປະມານນຶ່ງຮ້ອຍແມັດ (100 ແມັດ) ຊຶ່ງເປັນຈຸດສຸດທ້າຍທາງເບື້ອງຕາເວັນຕົກ ຂອງເສັ້ນຊາຍແດນລາວ-ຈີນ.

6. ເສັ້ນຊາຍແດນທັງໝົດລະຫວ່າງ ສອງປະເທດທີ່ໄດ້ກ່າວໃນມາດຕານີ້, ໄດ້ຂີດໝາຍເປັນເສັ້ນສີແດງ ໃນແຜນທີ່ມາດຕາສ່ວນນຶ່ງສ່ວນແສນ (1/100000) ຈັດພິມໂດຍກົມວັດແທກຂອງກະຊວງປ້ອງກັນປະເທດ ສາທາລະນະລັດ ປະຊາຊົນຈີນ ທີ່ໄດ້ຮັບການລົງນາມຈາກຜູ້ຕາງໜ້າຂອງສອງຝ່າຍ ແລະ ຖືເອົາແຜນທີ່ນີ້ຕິດແນບກັບສົນທິສັນຍາສະບັບນີ້.

## ມາດຕາ 2

1. ທັງສອງຝ່າຍຕົກລົງ ສ້າງຕັ້ງຄະນະກຳມະການ ປະສົມຂີດເສັ້ນຊາຍແດນເທິງພູມປະເທດຕົວຈິງເອີ້ນຫຍໍ້ວ່າ "ຄະນະກຳມະການປະສົມຊາຍແດນ ລາວ-ຈີນ" ຊຶ່ງປະກອບດ້ວຍຜູ້ແທນຂອງສອງຝ່າຍ ທີ່ມີຈຳນວນເທົ່າທຽມກັນ. ຄະນະກຳມະການປະສົມຊາຍ

ແດນລາວ-ຈີນ ເປັນຜູ້ດໍາເນີນການສໍາຫຼວດກວດກາ ແລະ ຂີດເສັ້ນຊາຍແດນຕະຫຼອດ ເສັ້ນຊາຍແດນທັງໝົດຢ່າງລະອຽດ ແລະ ປັກຫຼັກໝາຍຊາຍແດນປະເທດ ລະຫວ່າງ ສອງປະເທດຕາມທີ່ໄດ້ລະບຸໄວ້ໃນມາດຕາ 1 ຂອງສົນທິສັນຍາສະບັບນີ້, ຮ່າງອະນຸສັນຍາຊາຍແດນລະຫວ່າງ ສອງປະເທດ ແລະ ແຕ້ມແຜນທີ່ເສັ້ນຊາຍ ແດນສົມບູນ ຕິດແນບກັບສົນທິສັນຍາສະບັບນີ້.

2. ອະນຸສັນຍາຊາຍແດນ ລະຫວ່າງ ສອງປະເທດ ແລະ ແຜນທີ່ສົມບູນ ຕິດແນບສົນທິສັນຍາຊາຍແດນ ທີ່ຄະນະກໍາມະການປະສົມຊາຍແດນລາວ-ຈີນ ຈັດທໍາຂຶ້ນນີ້ ມີຜົນສັກສິດ ພາຍຫຼັງທີ່ຜູ້ຕາງໜ້າຂອງລັດຖະບານສອງຝ່າຍ ໄດ້ລົງນາມແລ້ວ ແລະ ກາຍເປັນເອກະສານ ຕິດແນບຂອງສົນທິສັນຍາສະບັບນີ້ດ້ວຍ, ແຜນທີ່ສົມບູນຕິດແນບສົນທິສັນຍາຊາຍແດນ ຊຶ່ງຄະນະກໍາມະການປະສົມຊາຍແດນລາວ-ຈີນ ແຕ້ມຂຶ້ນນັ້ນຈະໄດ້ປ່ຽນແທນແຜນທີ່ຕິດແນບສົນທິສັນຍາສະບັບນີ້.

3. ໃຫ້ຄະນະກໍາມະການປະສົມຊາຍແດນລາວ-ຈີນ ພົບປະເຈລະຈາ ແລະ ເຄື່ອນໄຫວປະຕິບັດໜ້າທີ່ ທີ່ໄດ້ກ່າວຂ້າງເທິງນັ້ນໂດຍທັນທີ ພາຍຫຼັງທີ່ສົນທິສັນຍາສະບັບນີ້ມີຜົນສັກສິດ ແລະ ຖືກລົບລ້າງໄປໃນຕົວໃນເມື່ອສໍາເລັດການປະຕິບັດໜ້າທີ່ ດັ່ງທີ່ໄດ້ລະບຸໄວ້ໃນສົນທິສັນຍາສະບັບນີ້.

**<u>ມາດຕາ 3</u>**

- ພາຍຫຼັງອະນຸສັນຍາຊາຍແດນລາວ-ຈີນ ແລະ ແຜນທີ່ສົມບູນຕິດແນບສົນທິສັນຍາຊາຍແດນມີຜົນສັກສິດແລ້ວ ທັງສອງຝ່າຍຈະເຊັນສັນຍາວ່າດ້ວຍ ລະບຽບການຊາຍແດນລະຫວ່າງສອງປະເທດ ເພື່ອປ່ຽນແທນ "ສັນຍາຊົ່ວຄາວ ວ່າດ້ວຍການແກ້ໄຂກິດຈະການຊາຍແດນລະຫວ່າງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ປະຊາຊົນຈີນ" ສະບັບລົງວັນທີ 8/10/1989 ເຊັນກັນທີ່ປັກກິ່ງ.

- ກ່ອນສັນຍາວ່າດ້ວຍ ລະບຽບການຊາຍແດນມີຜົນສັກສິດ ທັງສອງຝ່າຍຈະຄຸ້ມຄອງເສັ້ນຊາຍແດນຕາມ "ສັນຍາຊົ່ວຄາວ ວ່າດ້ວຍການແກ້ໄຂກິດຈະການຊາຍແດນ ລະ

ລະຫວ່າງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ປະຊາຊົນຈີນ" ສະບັບ ລົງວັນທີ 8/10/1989 ເຊັ່ນກັນ ທີ່ປັກກິ່ງ.

## ມາດຕາ 4

- ສົນທິສັນຍາສະບັບນີ້ ຕ້ອງໄດ້ຮັບການໃຫ້ສັດຕະຍາບັນ ຈາກທັງສອງຝ່າຍ ແລະ ມີຜົນສັກສິດ ນັບແຕ່ມື້ແລກປ່ຽນສານ ໃຫ້ສັດຕະຍາບັນເປັນຕົ້ນໄປ.

- ເອກະສານທຸກສະບັບກ່ຽວກັບຊາຍແດນ ລະຫວ່າງ ສອງປະເທດພ້ອມດ້ວຍແຜນທີ່ຕິດແນບທີ່ມີຂຶ້ນ ກ່ອນສົນທິສັນຍາສະບັບນີ້ ຕ້ອງຖືກລົບລ້າງນັບແຕ່ມື້ສົນທິສັນຍາສະບັບນີ້ມີຜົນສັກສິດ, ເວັ້ນເສັຍແຕ່ "ສັນຍາຊົ່ວຄາວ ວ່າດ້ວຍການແກ້ໄຂກິດຈະການຊາຍແດນ ລະຫວ່າງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ປະຊາຊົນຈີນ" **ສະບັບລົງວັນທີ** 8/10/1989 ເຊັ່ນກັນທີ່ປັກກິ່ງ ທີ່ໄດ້ລະບຸໄວ້ໃນມາດຕາ 3 **ຂອງສົນທິສັນຍາສະບັບນີ້.**

ສົນທິສັນຍາສະບັບນີ້ ລົງນາມທີ່..**ປັກກິ່ງ**, ວັນທີ**໒໔**.ເດືອນ.**໑໐**...ປີ.**໑໙໙໑**. ເປັນສອງສະບັບຕົ້ນແບບດຽວກັນ, ແຕ່ລະສະບັບຕົ້ນຂຽນ **ເປັນພາສາລາວ ແລະ ພາສາຈີນ,** ທັງສອງສະບັບຕົ້ນລ້ວນແຕ່ມີ ຄຸນຄ່າເທົ່າທຽມກັນ.

ຜູ້ຕາງໜ້າ ທີ່ມີອຳນາດເຕັມ
ແທນ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ



ຜູ້ຕາງໜ້າທີ່ມີອຳນາດເຕັມ
ແທນ
ສາທາລະນະລັດ ປະຊາຊົນ ຈີນ

李 鹏